**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**



# ຂໍ້ແນະນຳ

# ການລ້ຽງໄກ່ພື້ນບ້ານທີ່ໄດ້ຮັບຜົນດີ



ເອກະສານ ປະກອບການຝຶກອົບຮົມ 23:

CETDU
Central Extension
Training and
Development Unit

ປື້ມຄູ່ມືໃນການສົ່ງເສີມກະສິກໍາແມ່ນຫົວຂໍ້ຕໍ່ເນື່ອງຊຶ່ງລວມມີ:

- ວິທີການສົ່ງເສີມ (ພາກ 1 ຫາ 19)
- ເຄື່ອງມື ສໍາລັບວິທີການສົ່ງເສີມກະສິກໍາ ແລະປ່າໄມ້
- ປື້ມຄູ່ມື ກ່ຽວກັບເຕັກນິກ ກະສິກໍາ ລ້ຽງສັດ ປູກຝັງຫລັກສູດ (ພະນັກງານສົ່ງເສີມ ຂັ້ນເມືອງ ແລະພະນັກງານສົ່ງເສີມຂັ້ນບ້ານ)

ປື້ມຄູ່ມືດັ່ງກ່າວແມ່ນເຈດຕະນາເຮັດໃຫ້ການນໍາໃຊ້ງ່າຍຂຶ້ນໃນການຈັດຕັ້ງປະຕິບັດ ແລະ ນໍາສະເຫນີຈຸດປະສົງຂໍ້ມູນເບື້ອງຕົ້ນຂອງວິທີການສົ່ງເສີມກິສິກໍາ. ປື້ມຄູ່ມືດັ່ງກ່າວໄດ້ຖືກພັດທະນາໃນບາດກ້າວທໍາອິດຂອງໂຄງການ Leap ໂດຍການ ຮ່ວມມືກັບພະນັກງານຄູຝຶກຂອງກອງສົ່ງເສີມກະສິກໍາ ແລະປ່າໄມ້ (ໂດຍແມ່ນ ພະນັກງານວິຊາການ CETDU) ຄວາມມຸ້ງຫມາຍແມ່ນເພື່ອພັດທະນາເປັນເຄື່ອງມືໃຫ້ພະນັກງານ ສົ່ງເສີມຂັ້ນເມືອງສາມາດຖ່າຍທອດໄປເຖິງຄວາມຕ້ອງການຂອງຊາວກະສິກອນ.


**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**




22. ເຕັກນິກການປຸງແຕ່ງອາຫານຈາກສັດນໍ້າ
23. ຂໍ້ແນະນໍາວິທີການລ້ຽງໄກ່ພື້ນບ້ານທີ່ໄດ້ຮັບຜົນດີ
24. ເຕັກນິກການປູກເຂົ້າແບບກະເສດສຸມ
25. ເຕັກນິກການນໍາໃຊ້ EM
26. ເຕັກນິກການປຸງແຕ່ງອາຫານຈາກກ້ວຍ
27. ເຕັກນິກການຂະຫຍາຍພັນໄມ້ໃຫ້ໝາກ
28. ເຕັກນິກການເຮັດຝຸ່ນບົ່ມເພື່ອປັບປຸງດິນ
29. ເຕັກນິກການປູກຫວານຫາງແຂ້
30. ເຕັກນິກການປູກໝາກມັງກອນ
31. ເຕັກນິກການປູກສາລີ

**ແຜ່ນພັບ**

1. ເຕັກນິກການລ້ຽງໝູ
2. ພະຍາດກາຝາກຂອງໝູ
3. ເຕັກນິກການຕັດແຂ້ວໝູ
4. ການອະນຸບານໝູນ້ອຍເກີດໃໝ່
5. ເຕັກນິກການລ້ຽງໄກ່ພື້ນບ້ານ
6. ການປ້ອງກັນພະຍາດນິວຄາເຊີນໄກ່
7. ເຕັກນິກການຕົກກ້ານາແຊງ
8. ເຕັກນິກການເຮັດຝຸ່ນບົ່ມ ແລະການນໍາໃຊ້ໃນນາເຂົ້າ
9. ເຕັກນິກການຕົກກ້າດາປ໋ອກ
10. ເຕັກນິກການເຮັດນາຫວ່ານດິນຕົມ
11. ເຕັກນິກການໃຫ້ນໍ້າແກ່ເຂົ້າ
12. ຄວາມຕ້ອງການນໍ້າຂອງພືດ (ເຂດພາກໃຕ້, ກາງ ແລະເໜືອ)
13. ການລະບາດຂອງພະຍາດສັດຄ້ຽວເອື້ອງ

# ປື້ມຄູ່ມືໃນແຕ່ລະເລື້ອງ

1. ເຕັກນິກການປູກໝາກເຜັດໃຫຍ່
2. ເຕັກນິກການປູກຜັກບຼອກໂຄລີ
3. ເຕັກນິກການປູກຜັກກະລ່ຳປີ
4. ເຕັກນິກການປູກຜັກກະລ່ຳດອກ
5. ເຕັກນິກການປູກຜັກກາດຂາວ
6. ເຕັກນິກການປູກຜັກກາດນາ
7. ເຕັກນິກການປູກຜັກກາດຫົວ
8. ເຕັກນິກການປູກໝາກຖົ່ວ
9. ເຕັກນິກການປູກຜັກຫອມປ້ອມ
10. ເຕັກນິກການປູກໝາກແຕງກວາ
11. ເຕັກນິກການປູກຜັກທຽມ
12. ເຕັກນິກການປູກໝາກເຜັດຍອກ
13. ເຕັກນິກການປູກຜັກກາດຂຽວກວາງຕຸ້ງ
14. ເຕັກນິກການປູກໝາກເຜັດຂີ້ໜູ
15. ເຕັກນິກການປູກຜັກສະຫຼັດ
16. ເຕັກນິກການປູກໝາກເຜັດຂີ້ຟ້າ
17. ເຕັກນິກການປູກຜັກບົ່ວແບ່ງ
18. ເຕັກນິກການປູກໝາກຖົ່ວຍັດ
19. ເຕັກນິກການປູກຜັກບົ່ວຫົວໃຫຍ່
20. ເຕັກນິກການປູກໝາກເລັ່ນ
21. ເຕັກນິກການປູກຖົ່ວຝັກຍາວ



# ເອກະສານ 23 :
# ຂໍ້ແນະນຳວິທີການລ້ຽງໄກ່ພື້ນບ້ານທີ່ໄດ້ຮັບຜົນດີ

## ສາລະບານ

ບົດນຳ ........ 2
ຂໍ້ດີຂໍ້ເສຍຂອງໄກ່ພື້ນບ້ານ ........ 3
ການຄັດເລືອກພໍ່ແມ່ພັນ ........ 4
ການສ້າງຄອກ ........ 6
ອາຫານ ແລະ ການໃຫ້ອາຫານ ........ 7
ການຟັກໄຂ່ ........ 11
ການລ້ຽງໄກ່ນ້ອຍ ........ 12
ການປ້ອງກັນ ແລະ ຮັກສາໂຣກ ........ 15
ການກະກຽມ ການໃຫ້ວັກຊີນ ສຳລັບຍອດດັງ ແລະ ຍອດຕາ ........ 18
ການໃຫ້ວັກຊີນສຳລັບການສັກ ........ 18
ການເກັບຮັກສາຢາ ........ 19

ກອງສົ່ງເສີມ ກະສິກຳ ແລະ ປ່າໄມ້

ພະແນກ ສົ່ງເສີມ ແລະ ຄຸ້ມຄອງໂຄງການ

ໜ່ວຍງານ ພັດທະນາຮູບແບບ ແລະ ຝຶກອົບຮົມ, ເມສາ 2003

# ຂໍ້ແນະນໍາວິທີການລ້ຽງໄກ່ພື້ນບ້ານທີ່ໄດ້ຮັບຜົນດີ

## ບົດນໍາ

ການລ້ຽງໄກ່ແບບພື້ນເມືອງເພື່ອໃຫ້ໄດ້ຜົນຜະລິດດີນັ້ນ ຈໍາເປັນຕ້ອງໄດ້ອາໄສຫຼັກການວິທີການລ້ຽງແບບອຸດສາຫະກໍາ ຫຼືແບບເຄິ່ງອຸດສາຫະກໍາເຂົ້າມາຊ່ວຍ, ພ້ອມທັງພິຈາລະນາເຖິງປັດໃຈສໍາຄັນທີ່ຈໍາເປັນເຊັ່ນ: ສະພາບລັກສະນະຄອກໄກ່ເພື່ອໃຫ້ໄກ່ ນອນ, ແນວພັນໄກ່, ຄຸນນະພາບຂອງອາຫານ, ຢາວັກຊີນປ້ອງກັນໂຣກ ແລະປັດໃຈອື່ນໆ ອີກຫຼາຍຢ່າງຊຶ່ງຊາວກະສິກອນຜູ້ລ້ຽງຫາກນໍາ ເອົາປັດໃຈເລົ່ານຮ້ມາພິຈາລະນາຢ່າງລະອຽດທັງໝົດ ເຮັດໃຫ້ການລ້ຽງໄກ່ພື້ນເມືອງນັ້ນໄດ້ຮັບຜົນດີ. ແຕ່ເຖິງຢ່າງໃດກໍ່ ຕາມຖ້າຫາກຊາວກະສິກອນ ຫາກມີການດັດແປງຫຼັກການລ້ຽງແບບອຸດສະຫະກໍາ ນໍາມາລ້ຽງແບບພື້ນເມືອງໄດ້ດີ. ການດັດແປງວິທີດັ່ງກ່າວ ອາດເປັນການເພີ້ມຕົ້ນທຶນແຕ່ຜົນທີ່ ໄດ້ຮັບນັ້ນຄຸ້ມຄ່າກວ່າການລ້ຽງແບບປ່ອຍຕາມທໍາມະຊາດ ແລະປ່ອຍຕາມລໍາພັງໃຈ.

ເອກະສານການສົ່ງເສີມເລື້ອງນີ້ເປັນທິດທາງໃຫ້ຜູ້ທີ່ສົນໃຈໃນການລ້ຽງ ໄກ່ແບບພື້ນເມືອງສາ ມາດນໍາໄປປັບປຸງໃຫ້ເໝາະສົມກັບສະພາບທ້ອງຖິ່ນ ຫຼືສະພາບການລ້ຽງໄກ່ ຂອງຕົນເອງເພື່ອໃຫ້ໄດ້ຜົນຜະລິດແລະ ມີຄຸນນະພາບດີຂື້ນ. ປະຈຸບັນໄກ່ພື້ນເມືອງ ຫຼືເອີ້ນກັນທົ່ວໄປວ່າໄກ່ລາດນັ້ນໄດ້ຮັບຄວາມນິ ຍົມເພີ່ມສູງຂື້ນຫລາຍເພາະວ່າໄກ່ພື້ນເມືອງມີຊີ້ນແຊບກ່ວາໄກ່ພັນເປັນທີ່ຖືກໃຈຂອງຜູ້ບໍລິໂພກທົ່ວໄປ. ແຕ່ບັນຫາຄືປະລິມານໄກ່ພື້ນເມືອງຍັງບໍ່ພຽງພໍກັບຄວາມຕ້ອງການ ເພາະຊາວກະສິກອນ

ແລະປະຊາຊົນ ສ່ວນຫຼວງ ຫຼາຍປະມານ 70_80% ຈະລ້ຽງໄກ່ພື້ນເມືອງແບບປ່ອຍໄປຕາມທຳມະຊາດ 10_20 ໂຕຕໍ່ຄອບຄົວ ການລ້ຽງແບບປ່ອຍໄປຕາມມີຕາມ ເກີດ.

ແຕ່ຊາວກະສິກອນ ແລະປະຊາຊົນສາມາດນຳໃຊ້ເຕັກນິກການລ້ຽງປະສົມປະສານລະຫວ່າງໄກ່ພັນແທ້ກັບ ໄກ່ພື້ນເມືອງແລ້ວອາດສົ່ງຜົນໃຫ້ຈຳນວນໄກ່ພື້ນເມືອງ ທີ່ຈະອອກມາສູ່ຕະຫຼາດມີປະລິມານສູງຂຶ້ນຢ່າງແນ່ນອນ.

# 1. ຂໍ້ດີ ແລະຂໍ້ເສຍໃນການລ້ຽງໄກ່ພື້ນເມືອງ

## 1.1. ຂໍ້ດີຂອງໄກ່ພື້ນເມືອງ

- ຫາອາຫານເກ່ງສາມາດລ້ຽງແບບປ່ອຍໄປຕາມທຳມະຊາດໄດ້ເຮັດໃຫ້ປະຢັດຄ່າອາ ຫານໄດ້ຫຼາຍ
- ທົນຕໍ່ສະພາບພູມີປະເທດ ແລະ ອຸນຫະພູມໄດ້ເປັນຢ່າງດີ
- ທົນຕໍ່ໂຣກພະຍາດໄດ້ດີກ່ວາໄກ່ພັນອື່ນໆ
- ມີຄວາມສາມາດໃນການລ້ຽງລູກເກ່ງ
- ຊີ້ນຂອງໄກ່ພື້ນເມືອງແຊບກ່ວາໄກ່ພັນອື່ນໆ

## 1.2. ຂໍ້ເສຍຂອງໄກ່ພື້ນເມືອງ

- ໃຫ່ຍຊ້າໃຊ້ເວລາລ້ຽງດົນ
- ໃຫ້ໄຂ່ໜ່ອຍ ປີໜຶ່ງໃຫ້ໄຂ່ສະເລ່ຽປະມານ 40_50 ໜ່ວຍຕໍ່ປີໂດຍສະເພາະໃຫ້ໄຂ່ເປັນຊຸດໆລະ 7_15 ໜ່ວຍ
- ເມື່ອເວລາໄຂ່ສຸດແລ້ວໄກ່ພື້ນເມືອງ ມັກຟັກໄຂ່ເອງໃຊ້ເວລາເຖິງ 21 ວັນ







ຮູບ.8. ວິທີການເກັບຮັກສາຢາວັກຊີນ



ຮູບ.7. ວິທີການສັກຢາປ້ອງກັນສັດປີກ

## 12. ການເກັບຮັກສາຢາ

ຕ້ອງເກັບຮັກສາຢາວັກຊີນໄວ້ໃນບ່ອນທີ່ເຢັນ (ກະຕິກນໍ້າກ້ອນຫຼືຕູ້ເຢັນ) ຖ້າຫາກເກັບໄວ້ບ່ອນດັ່ງກ່າວ ວັກຊີນຊະນິດນີ້ຈະສາມາດມີອາຍຸນໍາໃຊ້ໄດ້ເຖິງສອງອາທິດ, ການລ້ຽງໄກ່ພື້ນເມືອງ (ໄກ່ລາດ) ເປັນການລົງທຶນບໍ່ສູງທຸກໆຄົນບໍ່ວ່າຈະເປັນຊາວກະສິກອນ ຫຼືປະຊາຊົນທົ່ວໆໄປກໍສາມາດລ້ຽງໄດ້ຖ້າທຸກຄົນລ້ຽງໃຫ້ຖືກ ຕາມຫັລກວິຊາການບອກກັບການລ້ຽງຜ່ານມາບໍ່ພຽງແຕ່ໄດ້ຊີ້ນໄວ້ເປັນອາຫານເທົ່ານັ້ນ ຍັງສາມາດສ້າງເສດຖະກິດແບບງ່າຍໆເຮັດໃຫ້ຄອບຄົວນັ້ນ ມີລາຍຮັບເພີ່ມຂື້ນໃນແຕ່ລະເດືອນ ຊຶ່ງຈະນໍາພາທ່ານໄປສູ່ເສດຖະກິດທີ່ດີອີກດ້ວຍ.



ໄຂ່ຈຶ່ງຈະແຕກເປັນລູກນ້ອຍ ແລະ ຈະລ້ຽງລູກໄປອີກປະມານ 2 ເດືອນຈຶ່ງຈະເລີ່ມກັບມາໄຂ່ ໃໝ່.

## 2. ການຄັດເລືອກພໍ່ແມ່ພັນໄກ່

ໄກ່ພື້ນເມືອງທີ່ຢູ່ໃນປະຈຸບັນມີຄວາມແຕກຕ່າງກັນໄປ ໃນເລື້ອງຂອງພັນ ແລະສາຍພັນຕາມສະພາບຂອງແຕ່ລະທ້ອງຖິ່ນ ແຕ່ເຖິງຢ່າງໃດກໍດີມັກຈະມີວັດຖຸປະສົງການລ້ຽງເໝືອນໆກັນເຊັ່ນ: ການລ້ຽງເພື່ອເອົາໄຂ່ ແລະຊີ້ນໂດຍປ່ອຍໃຫ້ໄກ່ເຫຼົ່ານີ້ຊອກຫາ ອາຫານກິນເອງຕາມທໍາມະຊາດ.



ຮູບ.1. ລັກສະນະຂອງພໍ່ແມ່ພັນ ທີ່ດີ

# 3. ແນວພັນໄກ່ທີ່ນຳມາລ້ຽງ

## 3.1. ສຳລັບໂຕຜູ້ທີ່ດີ

ໄກ່ໂຕຜູ້ທີ່ດີນັ້ນຕ້ອງມີຮູບຮ່າງສູງໃຫ່ຍສົມບູນ ແລະແຂງແຮງ ມີນ້ຳໜັກປະມານ 2 ກິໂລຂຶ້ນ ໄປອາຍຸ ຕັ້ງແຕ່ 9 ເດືອນເຖິງ 3 ປີ, ຕ້ອງເປັນໄກ່ທີ່ປະສົມພັນເກັ່ງພ້ອມທັງຂອກຫາອາຫານກິນເກັ່ງ ແລະທົນທານຕໍ່ພະຍາດໄດ້ດີ.

## 3.2. ສຳລັບໂຕແມ່ທີ່ດີ

ໄກ່ໂຕແມ່ທີ່ດີຕ້ອງມີຮູບຮ່າງສູງໃຫ່ຍເໝືອນກັນ ແລະເປັນໄກ່ທີ່ສົມບູນແຂງແຮງໃຫ້ໄຂ່ຫຼາຍ ລ້ຽງລູກດີ, ມີນ້ຳໜັກ 1 ກິໂລຂຶ້ນໄປ ອາຍຸແຕ່ 7 ເດືອນເຖິງ 3 ປີ ການໃຫ້ໄຂ່ຢ່າງໜ້ອຍ 12 ໜ່ວຍຕໍ່ 1 ເທື່ອສາມາດຜະລິດໄຂ່ໄດ້ 4 ເທື່ອຕໍ່ປີ ຈຶ່ງເປັນແມ່ໄກ່ທີ່ດີ.

ໃນການເລືອກແນວພັນໄກ່ນັ້ນຖ້າຫາກພໍ່ແມ່ພັນໄກ່ມີອາຍຸເກີນ 3 ປີຂຶ້ນໄປກໍຕ້ອງໄດ້ເລືອກພໍ່, ແມ່ພັນໃໝ່, ເຊິ່ງໃນແຕ່ລະເທື່ອທີ່ແມ່ໄກ່ຟັກອອກມາເປັນໄກ່ນ້ອຍ ເວລາໃຫ່ຍຂຶ້ນມາເຮົາກໍ ເລືອກເອົາໂຕທີ່ໃຫ່ຍກ່ວາ ໝູ່ ແລະແຂງແຮງເລືອກເອົາ 2_3 ໂຕໄວ້ເປັນແນວພັນການເລືອກແນວພັນໄກ່ທີ່ ດີໄວ້ເປັນແນວພັນນັ້ນຈະຊ່ວຍເຮັດໃຫ້ຊາວກະສິກອນ ແລະປະຊາຊົນໄດ້ມີພໍ່, ແມ່ພັນທີ່ດີໄວ້ຊຶ່ງຈະເຮັດໃຫ້ຜົນຜະລິດສູງສ່ວນອັດຕາພໍ່ພັນ, ແມ່ພັນ ທີ່ເໝາະສົມຄື: ໂຕຜູ້ຕໍ່ໂຕ ແມ່ 1:5 ເຖິງ 1:10 ບໍ່ຄວນເກີນກ່ວານີ້ເພາະຈະເຮັດໃຫ້ໄຂ່ບໍ່ມີນ້ຳເຊື້ອຫຼາຍ.



# 11. ການໃຫ້ວັກຊີນສຳລັບສັກ

## 11.1. ອຸບປະກອນສຳລັບໃຫ້ວັກຊີນ

- ຊີແລງສິດ ຢາທີ່ອະເຊື້ອ ແລ້ວຂະໜາດ 3 ມລ
- ກວດຢາວັກຊີນ 1 ກວດ ບັນຈຸ 20 ເຂັມ(ຢາປະເພດນີວຄາເຊີນແກ່)
- ເຂັມສັກ 2 ດວງ( ເບີ 22_23 G)

## 11.2. ການກະກຽມສັກຢາ

- ສັ່ນ ກວດຢາ ວັກຊີນໃຫ້ ລະລາຍ ເສັຍກ່ອນ
- ດູດເອົາວັກຊີນ ປະມານ 1 ມ ລ
- ຖອດ ເອົາຊີແລງອອກແຕ່ ໃຫ້ເຂັມຄາຢູ່ໃນກວດຢາ
- ເອົາເຂັມ ດວງໃໝ່ສຸບໃສ່ແລ້ວ ນຳໄປ ສັກໃສ່ໄກ່

## 11.3. ຂໍ້ຄວນລະວັງ

ບໍ່ໃຫ້ໃຊ້ເຂັມດວງດຽວກັນໃນເວລາທີ່ສັກວັກຊີນໄກ່ ແລະດູດເອົານ້ຳຢາຕ້ອງໃຫ້ມີເຂັມສຳລັບສັກ ແລະເຂັມສຳລັບດູດແນວລະດວງ.

## 11.4. ວິທີສັກ

ສັກໃສ່ ຫຼືບໜັງກ້ອງ ປີກ

## 10.2. ການປະສົມນ້ຳຢາໃສ່ນ້ຳກັ່ນ

- ໃຊ້ຊີແລງ ດູດເອົາໃຫ້ໄດ້ບໍລິມາດ ຖືກຕ້ອງ 1,5 ຫາ 2 ຊີຊີ
- ສີດ ນ້ຳກັ່ນ ໃສ່ໃນ ແກ້ວຢາ
- ສັ່ນໃຫ້ ຢາລະລາຍ ກັບນ້ຳກັ່ນ ໃຫ້ດີ
- ຈາກນັ້ນກໍດູດເອົານ້ຳຢາໃສ່ຊີ ແລງຄືນຖອດຊີແລງອອກຈາກເຂັມສັກຢາແລ້ວກໍນຳຊີແລງດັ່ງກ່າວໄປໃສ່ເຂັມແນວຢອດດັງ, ຕາ

## 10.3. ວິທີຢອດ

ຢອດໃສ່ຕາດັງໄກ່ທັງສອງເບື້ອງໆລະ1 ຫາ2 ຢອດ ຕໍ່ໂຕ



ຮູບ.6. ວິທີການຢອດຢາວັກຊິນໃຫ້ໄກ່ນ້ອຍອາຍຸ 1 ຫາ 7 ວັນ



## 4. ການສ້າງຄອກ

ການລ້ຽງໄກ່ພື້ນເມືອງນັ້ນພວກເຮົາຕ້ອງໄດ້ຄຳນຶງເຖິງສະຖານທີ່ໝາຍຄວາມວ່າຈະຕ້ອງມີສະຖານທີ່ງເໝາະສົມ ແລະສິ່ງທີ່ຂາດບໍ່ໄດ້ຄື: ຄອກສຳລັບໃຫ້ໄກ່ນອນ ໂດຍໃຊ້ວັດຖຸທີ່ຫາໄດ້ງ່າຍໃນແຕ່ລະທ້ອງຖິ່ນພ້ອມທັງເຮັດຮັງໃຫ້ໄກ່ໄຂ່.

ໄກ່ຕ້ອງມີຄອກທີ່ດີ ມີຫຼັງຄາກັນແດດກັນຝົນ ພ້ອມທັງມີອາກາດປອດປົ່ງດີ, ມີແສງສະຫວ່າງພຽງພໍ, ຄອກໄກ່ຕ້ອງໃຫ້ຫ່າງຈາກເຮືອນພໍສົມຄວນ. ແຕ່ກໍມີຊາວກະສິກອນ ແລະປະຊາຊົນອີກຈຳນວນຫລວງຫລາຍທີ່ຍັງລ້ຽງໄກ່ດ້ວຍການປ່ອຍໄກ່ ໃຫ້ໄກ່ຊອກຫາບ່ອນນອນຢູ່ຕາມກ້ອງລ່າງເຮືອນ ຫຼື ນອນຢູ່ຕາມຕົ້ນໄມ້.

ການເຮັດຄອກໄກ່ແມ່ນຂຶ້ນຢູ່ກັບຈຳນວນໄກ່ທີ່ຈະລ້ຽງ ອາຍຸຂອງໄກ່ທີ່ຈະລ້ຽງໂດຍຄິດໄລ່ຈຳນວນໄກ່ 8 ໂຕຕໍ່ 1 ແມັ໋ດມົນທົນ, ຄອກໄກ່ຕ້ອງມີຄອນສຳລັບໃຫ້ໄກ່ນອນ, ມີຮັງສຳລັບໃຫ້ໄກ່ໄຂ່, ພື້ນຄອກໃຫ້ສູງຈາກໜ້າດິນ ປະມານ 60 ຊັງຕີແມັດ.

ຖ້າຫາກຄອກໄກ່ມີຂະໜາດກ້ວາງ 3 ແມັດ ຍາວ 5 ແມັດ ຈະສາມາດລ້ຽງໄກ່ໄດ້ປະມານ 120 ໂຕ ແຕ່ຖ້າຕ້ອງການລ້ຽງເປັນ ພໍ່ແມ່ພັນຄວນໃຊ້ຄອກປະ ມານ 4 ໂຕຕໍ່ 1ແມັດມົນທົນ.



ຮູບ.2. ການສ້າງຄອກໄກ່

## 5. ອາຫານ ແລະການໃຫ້ອາຫານ

- ປົກກະຕິແລ້ວການລ້ຽງໄກ່ພື້ນເມືອງ ນັ້ນມັກຈະປ່ອຍໃຫ້ຊອກຫາອາຫານກິນເອງຕາມມີຕາມເກີດ ຫຼື ຕາມທຳມະຊາດໂດຍ ຜູ້ລ້ຽງໄດ້ໃຫ້ອາຫານ ເພີ່ມເຕີມໃນເວລາຕອນເຊົ້າແລະຕອນແລງ, ອາຫານ ທີ່ໃຫ້ໄດ້ແກ່ເຂົ້າເປືອກ, ເຂົ້າປຽນ,ເມັດສາລີເປັນຕົ້ນ ຈາກສະພາບການລ້ຽງດູແບບນີ້ເຮັດໃຫ້ຄວາມສົມບູນຂອງໄກ່ ປ່ຽນແປງໄປຕາມສະພາບດິນຟ້າອາກາດຄື: ໃນຊ່ວງລະດູຝົນ ໄກ່ຈະມີອາຫານພຽງພໍເຊັ່ນ: ເມັດພັນພືດຕ່າງໆ ແມງໄມ້ຊຶ່ງອາຫານທັງສອງຊະນິດນີ້ມີທັງວິຕາມິນ ແລະໂປຼຕີນເຮັດໃຫ້ໄກ່ ໃນລະດູນີ້ມີການຈະເລີນເຕີບໂຕ ແລະແຂງແຮງດີກ່ວາໄກ່ໃນລະດູອື່ນໆ
- ສ່ວນໃນລະດູເກັບກ່ຽວເຂົ້າ, ຟາດເຂົ້າໄກ່ກໍ່ໄດ້ຮັບອາຫານທີ່ຕົກເຮ່ຍຫຼາຍເຮັດໃຫ້ໄກ່ມີສະພາບຮ່າງກາຍອ້ວນພີສົມບູນພໍສົມຄວນ.



ໄຟ ຫຼືຕົ້ມໃສ່ນ້ຳຮ້ອນໆ ແລ້ວຈຶ່ງນຳໄປຖູ໋ມໃນເວລາສັກໄກ່ນັ້ນຄວນລະມັດລະວັງບໍ່ໃຫ້ສັກຖືກເສັ້ນເລືອດ

### 9.2. ວັກຊີນໄກ່ຊະນິດຕ່າງໆທີ່ສຳຄັນ ແລະຜູ້ລ້ຽງຄວນຮູ້ຈັກ

ວັກຊີນປ້ອງກັນໂຣກນິວຄາເຊີນ ຫຼືຊາວບ້ານເອີ້ນກັນວ່າໄກ່ຕາຍຫ່າຊຶ່ງເປັນສາຍເຫດຂອງ ໂຣກນີ້ເກີດຈາກເຊື້ອໄວຣັດຖ້າເກີດໂຣກນີ້ລະບາດຂຶ້ນເຮັດໃຫ້ອັດຕາການຕາຍຈະສູງຫຼາຍ ບາງເທື່ອອາດຈະຕາຍໝົດຄອກ, ວັກຊີນຊະນິດນີ້ມີ 2 ຊະນິດຄື:

- ຊະນິດໃຊ້ສຳລັບໄກ່ນ້ອຍຢູ່ໃນລະຫ່ວາງ 1_3 ອາທິດວິທີໃຊ້ດ້ວຍການຢອດຕາ ແລະ 1 ຢອດດັງ ປະມານ 1_2 ຢອດຕໍ່ຕົວ
- ຊະນິດໃຊ້ປະເພດສັກເປັນຊະນິດທີ່ໃຊ້ສຳ ລັບໄກ່ທີ່ເຄີຍຜ່ານການຢອດຕາດັງມາກ່ອນແລ້ວວິທີການໃຊ້ໂດຍ ໃຊ້ສັກເຂົ້າກ້າມຊີ້ນ ແລ້ວກ້ອງກົກປີກໃຊ້ຢາຈຳ ນວນ 1ຊີຊີ ຕໍ່1ໂຕ

## 10. ການກະກຽມການໃຫ້ວັກຊີນສຳລັບຢອດດັງ ແລະຢອດຕາ

### 10.1. ອຸປະກອນປະກອບມີ

- ແກ້ວຢາວັກຊີນ1ແກ້ວບັນຈຸໄດ້ 25 ເຂັມຕໍ່ໄກ່ 25 ໂຕ (ຢາປະເພດນິວຄາເຊີນອ່ອນ)
- ນ້ຳກັ່ນ
- ຊີແລງຢາງຂະໜາດ 3 ຫຼື 5 ຊີຊີ
- ແນວຢອດດັງ ແລະຢອດຕາ

# 9. ການປ້ອງກັນ ແລະຮັກສາໂຣກ

ໂດຍທົ່ວໄປການລ້ຽງໄກ່ພື້ນເມືອງ ແຕ່ລະປີມັກຈະເກີດໂຣກລະບາດເປັນສ່ວນໃຫ່ຍຄືໂຣກນິວຄາເຊີນ. ໂຣກອະຫິວາໄກ່ທີ່ຊາວບ້ານເອີ້ນກັນວ່າໄກ່ຕາຍຫ່າ ຊຶ່ງເປັນສາຍເຫດທີ່ສຳຄັນ ເຮັດໃຫ້ຜູ້ລ້ຽງໝົດກຳລັງໃຈ ດັ່ງນັ້ນ, ເພື່ອຫຼີກເວັ້ນຕໍ່ພະຍາດເຫຼົ່ານຮ້ຕ້ອງໄດ້ຊອກຫາວິທີແກ້ໄຂ ໂດຍໃຊ້ວັກຊີນປ້ອງກັນ ເພື່ອກະຕຸ້ນໃຫ້ຮ່າງກາຍຂອງໄກ່ສ້າງຄວາມຕ້ານທານໄດ້ສູງປະຈຸບັນມີວັກຊີນຫລາຍຊະນິດທີ່ຖືກຜະລິດ ຂຶ້ນມາເພື່ອໃຊ້ສຳລັບປ້ອງກັນ ໂຣກຂອງໄກ່ ແລະສັດອື່ນໆ.

## 9.1. ຄວນປະຕິບັດ ຫຼືຄວນຈຳໃນການໃຊ້ວັກຊີນໄກ່ຄື

- ຕ້ອງສັກວັກຊີນໃນເວລາທີ່ໄກ່ຍັງຢູ່ໃນສະພາບສົມບູນແຂງແຮງເທົ່ານັ້ນ
- ຄວນສັກວັກຊີນໄກ່ໃນເວລາທີ່ມີອາກາດເຢັນຄື: ໃນຍາມຕອນເຊົ້າແລງ, ການສັກວັກຊີນໃນ ລະຫວ່າງອາກາດຮ້ອນຈະບໍ່ເປັນຜົນດີໃຫ້ແກ່ໄກ່ ແລະອາດຈະສ້າງຄວາມສູນເສັຍໃຫ້ແກ່ໄກ່ໄດ້ຫຼາຍ
- ການສັກວັກຊີນ ຄວນປະຕິບັດຕາມຄຳແນະນຳຂອງຊະນິດຢາ ໃນກວດວັກຊີນນັ້ນວ່າຈະນຳ ໃຊ້ດ້ວຍວິທີໃດ ? ເຊັ່ນ: ໃຊ້ດ້ວຍວິທີການສັກປີກ, ສັກກ້າມຊີ້ນ ຫຼືວິທີຢອດດັງ, ຕາ ແລະເບິ່ງອາຍຸການຜະລິດຂອງວັກຊີນ
- ວັກຊີນທີ່ປະສົມກັບນ້ຳກັ່ນແລ້ວຄວນນຳໄປສັກກັບໄກ່ ຫຼືຢອດທັນທີບໍ່ຄວນປ່ອຍໄວ້ໃຫ້ດົນເພາະວ່າວັກຊີນຈະເສັຍຄູນ ແລະອີກຢ່າງນຶ່ງບໍ່ຄວນໃຫ້ແສງແດດສ່ອງໃສ່
- ກວດຢາວັກຊີນທີ່ໃຊ້ແລ້ວຄວນນຳໄປຝັງດິນໃຫ້ເລິກ ຫຼືວ່ານຳໄປເຜົາ





- ສ່ວນໃນລະດູແລ້ງມັກຈະມີບັນຫາໄກ່ຂາດ ອາຫານຕາມທຳມະຊາດ ໂດຍສະເພາະແມ່ນເລື່ອງນ້ຳ ຊຶ່ງຈະມັກຈະຂາດຢູ່ສະເໝີຈຳເປັນຜູ້ລ້ຽງຕ້ອງໄດ້ກຽມນ້ຳໄວ້ໃຫ້ໄກ່ດ້ວຍ



ຮູບ.3. ອາຫານ ແລະການໃຫ້ອາຫານ

## 5.1. ຫຼັກການ ໃຫ້ອາຫານໄກ່ພື້ນເມືອງມີດັ່ງນີ້

- ຄວນຊື້ຫົວອາຫານເພື່ອເອົາມາປະສົມກັບ ອາຫານທີ່ຜູ້ລ້ຽງມີເຊັ່ນ: ປະສົມກັບເຂົ້າປຽນ ຫຼືຮໍາໄວ້ສໍາລັບລ້ຽງໄກ່ນ້ອຍຈະເຮັດໄກ່ນ້ອຍໃຫ່ຍໄວ ແລະແຂງແຮງ.
- ການໃຊ້ເສດອາຫານມາລ້ຽງໄກ່ຄວນຄໍານຶງເຖິງຄວາມສະອາດ ແລະ ສິ່ງເຈືອປົນທີ່ເປັນພິດຕໍ່ ໄກ່.
- ຖ້າເປັນໄປໄດ້ຄວນບົດເປືອກຫອຍປົນໃນອາຫານທີ່ໃຫ້ໄກ່ກິນຈະຊ່ວຍແກ້ບັນຫາເລື່ອງເປືອກໄຂ່ບາງ.
- ຄວນນໍາເອົາຫ້ຍາຂົນ ຫຼືພືດຕະກຸນຖົ່ວບາງຊະນິດ ໃບກະຖິນ ຫຼື ເສດພືດຕ່າງໆ ໃບມັນຕົ້ນ ນໍາມາຟັກ ຫຼືຊອຍໃຫ້ໄກ່ກິນຈະເຮັດໃຫ້ໄກ່ ໄດ້ຮັບວິຕາມິນ ແລະໂປຼຕີນເພີ່ມຫຼາຍຂຶ້ນ.
- ບ່ອນທີ່ມີແສງສະຫ່ວາງ (ໄຟຟ້າ) ຄວນໃຊ້ແສງໄຟເພື່ອລໍ້ແມງໄມ້ເລົ່ານັ້ນຈະເປັນອາຫານຂອງໄກ່. ຈະເຮັດໃຫ້ໄກ່ໄດ້ອາຫານທາດໂປຼຕີນແລະເປັນການທໍາລາຍແມງໄມ້ອີກດ້ວຍ.
- ຄວນມີສິ່ງໃສ່ອາຫານ ແລະນໍ້າ ໂດຍສະເພາະສິ່ງທີ່ພວກເຮົາຫາໄດ້ງ່າຍເຊັ່ນ: ຢາງລົດໃຫ່ຍ ຫຼືໄມ້ໃຜ່ສໍາລັບຮາງໄສ່ອາຫານຄວນໃຫ້ສູງພໍດີກັບໄກ່ຕອດກິນອາຫານໄດ້, ສ່ວນນໍ້ານັ້ນຄວນເປັນທີ່ສະອາດໄວ້ໃຫ້ໄກ່ກິນຕະຫຼອດເວລາ, ສ່ວນອາຫານອາດຈະເກືອພຽງຕອນເຊົ້າ ແລະຕອນແລງກໍພໍ ນອກຈາກນັ້ນໃຫ້ໄກ່ຫາອາຫານກິນເອງ.
- ສໍາລັບອາຫານໄກ່ນ້ອຍຄວນເປັນອາຫານທີ່ລະອຽດ ຍ່ອຍໄດ້ງ່າຍ ແລະໃຫ້ເທື່ອລະໜ້ອຍ ເພື່ອປ້ອງກັນບໍ່ໃຫ້ລະບົບກະເພາະອາຫານໄກ່ນ້ອຍທໍາລາຍໜັກເກີນໄປ.



## 8.2. ຄອກໄກ່ນ້ອຍ

ການເຮັດຄອກໄກ່ນ້ອຍນັ້ນມີຢູ່ຫລາຍວິທີ, ຫລາຍຮູບຫລາຍແບບເຮັດແນວກໍໄດ້ຂໍພຽງແຕ່ໃຫ້ໄກ່ນ້ອຍ ໃຫ້ໄດ້ຮັບຄວາມອົບອຸ່ນ ຄືກັນກັບຢູ່ໃນແມ່ຂອງມັນສໍາລັບ, ບ່ອນທີ່ມີໄຟຟ້າກໍຕ້ອງໃຊ້ດອກໄຟ, ບ່ອນທີ່ບໍ່ມີໄຟຟ້າກໍ ຄວນໃຊ້:

- ເຕົາຖ່ານຮອງພື້ນຄອກຕ້ອງໃຊ້ແກບ, ຂີ້ເລື່ອຍ ຫຼືເຟືອງນໍາມາຕັດເປັນທ່ອນສັ້ນໆກໍໄດ້.
- ອ້ອມດ້ວຍຜ້າ, ຜ້າຢາງຕາມບໍລິເວນທາງນອກຄອກເພື່ອບໍ່ໃຫ້ລົມພັດເຂົ້າໄປດ້ານໃນ.
- ໃຊ້ດອກໄຟ 100 ວັດມີຝາງວມເທິງເຮັດໃຫ້ແສງສະຫ່ວາງ ເພື່ອໃຫ້ໄກ່ນ້ອຍໄດ້ຮັບຄວາມອົບອຸ່ນ ຖ້າກໍລະນີບໍ່ມີໄຟຟ້າກໍຄວນໃຊ້ເຕົາຖ່ານທີ່ມີຄວາມຮ້ອນ ໄປວາງໄວ້ເຄິ່ງກາງຂອງຄອກໄກ່ ແຕ່ຕ້ອງເອົາສັງກະສີອ້ອມຮອບເຕົາຖ່ານດ້ານນອກໄວ້.
- ຄວນມີຮາງ, ຕຸກນໍ້າໄວ້ສໍາລັບໃຫ້ໄກ່ນ້ອຍກິນ. ການອະນຸບານໄກ່ນ້ອຍນີ້ຈະໃຊ້ເວລາປະມານ 3_5 ອາທິດຂຶ້ນຢູ່ກັບລະດູການ ຖ້າຫາກອາກາດໜາວຈະໃຊ້ເວລາລ້ຽງປະມານ 5 ອາທິດ ຖ້າ ລະດູຮ້ອນຈະໃຊ້ ເວລາປະມານ 3 ອາທິດ, ການອະນຸບານໄກ່ນ້ອຍນີ້ໃນຍາມລະດູຮ້ອນກາງເວັນບໍ່ຈໍາເປັນໃຊ້ໄຟເພາະວ່າອູນນະພູມສູງຢູ່ແລ້ວ ແລະກໍເອົາຜ້າກັ້ງລົມທີ່ອ້ອມໄວ້ອອກເພື່ອເຮັດໃຫ້ລົມພັດຜ່ານລະບາຍຄວາມຮ້ອນພາຍໃນຄອກອອກ ແລະເວລາກາງຄືນຄວນອ້ອມໄວ້ຄືເກົ່າ.

## 8.1. ຜົນເສັຍທີ່ແມ່ໄກ່ລ້ຽງລູກເອງ

- ໃນລະຫ່ວາງການລ້ຽງລູກນັ້ນແມ່ໄກ່ຈະເຊົາໄຂ່, ເຮັດໃຫ້ການໄຂ່ໃນຊຸດຕໍ່ໄປຊັກຊ້າ
- ອັດຕາການຕາຍຂອງລູກໄກ່ນັ້ນສູງເນື່ອງຈາກ ສະພາບອາກາດມີການປ່ຽນແປງເຊັ່ນ: ແດດຮ້ອນ ແລະ ຝົນຕົກເຮັດໃຫ້ໄກ່ນ້ອຍປັບໂຕນຳບໍ່ທັນໃນບ່ອນທີ່ມີອາຫານຕາມທຳມະຊາດບໍ່ພຽງພໍ ເຮັດໃຫ້ລູກໄກ່ໄດ້ຮັບອາຫານບໍ່ຄົບຖ້ວນເຮັດໃຫ້ໄກ່ນ້ອຍອ່ອນແອ,ໃຫ່ຍຊ້າມີພູມຕ້ານທານຕໍ່ໂຣກຕ່ຳເປັນເຫດໃຫ້ໄກ່ນ້ອຍຕາຍດ້ວຍຫລາຍວິທີ.
- ຜົນເສັຍດັ່ງກ່າວຂ້າງທິງ:ນີ້;_ຕາມປົກກະຕິແລ້ວຜູ້ລ້ຽງ ມັກຈະເບິ່ງຂ້າມ ແລະ ບໍ່ໃຫ້ຄວາມສົນໃຈເທົ່າທີ່ ຄວນເພາະວ່າລາຄາໄກ່ ນັ້ນບໍ່ສູງຄືກັບສັດໃຫ່ຍຊະນິດອື່ນໆ ທີ່ລາຄາສູງ, ເຖິງຢ່າງໃດກໍຕາມຖ້າຫາກຜູ້ລ້ຽງຫາກເອົາໃຈໃສ່ເພີ່ມຂຶ້ນກໍຈະເປັນການດີທີ່ເຮັດໃຫ້ຜູ້ລ້ຽງນັ້ນ ມີລາຍໄດ້ເພີ່ມ, ວິທີແກ້ໃຂນັ້ນຄວນ ແຍກລູກໄກ່ນ້ອຍອອກຈາກ ແມ່ຂອງມັນມາລ້ຽງສະເພາະ.



ຮູບ.5. ຜົນເສຍທີ່ແມ່ໄກ່ລ້ຽງລູກເອງ



- ໃນໄລ່ຍະໄກ່ໄຂ່ ແລະ ການຟັກໄຂ່ ຂອງແມ່ໄກ່ຄວນໃຫ້ອາຫານເສີມ
- ເປັນພິເສດສຳລັບ ແມ່ໄກ່ຊຶ່ງຈະຊ່ວຍ ໃຫ້ແມ່ໄກ່ແຂງແຮງບໍ່ຈ່ອຍຜອມ ແລະ ບໍ່ ຕ້ອງໄປຫາກິນທາງອື່ນ
- ໃນໄລຍະລູກໄກ່ທີ່ເບາະອອກມາເປັນໄກ່ນ້ອຍ ນັ້ນຕ້ອງໄດ້ຊື້ຫົວອາຫານສູດປະສົມປະເພດ ໄກ່ນ້ອຍທີ່ມີຈຳໜ່າຍຕາມຮ້ານມາໃຫ້ໄກ່ນ້ອຍກິນ, ສ່ວນການໃຫ້ອາຫານປະເພດເຂົ້າປຽນ, ຮຳ ໃຫ້ໄກ່ນ້ອຍກິນຈະບໍ່ໄດ້ຮັບຜົນເພາະຈະເຮັດ ໃຫ້ໄກ່ນ້ອຍມ~ນໃຫ່ຍຊ້າບໍ່ແຂງແຮງ ແລະ ມັກຕາຍ, ດັ່ງນັ້ນຈຶ່ງຄວນຊອກຫາອາຫານສູດປະ ສົມທີ່ມີທາດໂປຼຕີນລະຫ່ວາງ 17_19 %ໂດຍ ໃຫ້ໃນໄລຍະການ ເກີດໃໝ່ປະມານ 3_5 ອາທິດຕໍ່ຈາກນັ້ນກໍຄວນປ່ອຍໃຫ້ໄກ່ນັ້ນຊອກຫາ ອາຫານກິນເອງຕາມທຳມະຊາດ, ໃນເວລາຕອນແລງ ກໍຄວນໄລ່ໄກ່ເຂົ້າຄອກພ້ອມທັງໃຫ້ອາ ຫານຕາມທ້ອງຖິ່ນຂອງຕົນທີ່ມີພຽງເລັກໜ້ອຍກໍພໍ. ໃນກໍລະນີທີ່ລ້ຽງໄກ່ຈຳນວນຫລາຍສິ່ງນຶ່ງທີ່ຕ້ອງໄດ້ຄຳນຶງເຖິງຄື: ອາຫານຕາມທຳມະຊາດວ່າມີພຽງພໍຕໍ່ຈຳນວນໄກ່ ຫຼື ບໍ່ ? ຖ້າຫາກບໍພຽງພໍກໍຄວນຊອກຊື້ອາຫານສູດປະສົມ, ປະເພດເຂົ້າ ເປືອກ, ເມັດສາລີ, ຮຳ ແລະ ອື່ນໆ ເພື່ອໄວ້ໃຫ້ໄກ່ກິນຫຼີກເວັ້ນເພື່ອບໍ່ໃຫ້ບໍໃຫ້ໄກ່ຈ່ອຍຜອມ ບໍ່ແຂງແຮງ ແລະ ມັກສະແດງອາການປ່ວຍຈົນເຖິງຕາຍໃນທີ່ສຸດ.

## 6. ການຟັກໄຂ່

ລັກສະນະການຟັກໄຂ່ຂອງໄກ່ພື້ນເມືອງນັ້ນ ຊາວກະສິກອນສ່ວນຫຼາຍຍັງປ່ອຍໃຫ້ແມ່ໄກ່ນັ້ນຟັກເອງ ຖ້າຫາກລ້ຽງແບບອຸດສາຫະກໍາແລ້ວລັກຊະນະການຟັກໄຂ່ແມ່ນໃຊ້ຕູ້ຟັກເພື່ອເຮັດໃຫ້ແມ່ໄກ່ໃຫ້ໄຂ່ຫຼາຍຂື້ນ, ໃນເມື່ອໄກ່ທີ່ລ້ຽງອາຍຸໄດ້ປະມານ 7 ເດືອນກໍຈະເລີ່ມໄຂ່ຜູ້ລ້ຽງຕ້ອງໄດ້ປະຕິບັດ:



ຮູບ.4. ລັກສະນະຂອງການຟັກໄຂ່



## 7. ອຸປະກອນ ແລະວິທີປະຕິບັດ

ຄວນກະກຽມກະຕ່າ, ກະບຸງ ຫຼືແກດເຈ້ຍແຕ່ບໍ່ໃຫ້ເລິກເກີນໄປຮອງດ້ວຍເຟືອງພ້ອມທັງ ນໍາໄປວາງໄວ້ໃນເຮືອນຄອກໄກ່ບ່ອນທີ່ມີອາກາດລຸ່ວງດີ ໃນໄລຍະທໍາອິດຂອງການໃຫ້ໄຂ່ນັ້ນຄວນເກັບໄຂ່ໃນຮັງອອກທຸກມື້, ສ່ວນໃນລະດູຮ້ອນສໍາລັບໄຂ່ທີ່ເກັບໜ່ວຍທໍາອິດ (ໜ່ວຍທີ່ໜຶ່ງ) ນັ້ນມັກຟັກບໍ່ ແຕກເປັນໂຕກາຍເປັນໄຂ່ເນົ່າ ຫຼືເອີ້ນກັນວ່າໄຂ່ຈ້າງຮັງຄວນນໍາເອົາໄປ ປຸງແຕ່ງເປັນອາຫານຫັລງຈາກເກັບໄຂ່ໃນຮັງແຕ່ລະມື້ຄວນປິດຮັງໄຂ່ໃນຍາມກາງຄືນ ເພື່ອປ້ອງກັນບໍ່ໃຫ້ໄກ່ຂີ້ໃສ່ ເພື່ອຫຼີກເວັ້ນເວລາໄກ່ຟັກບໍ່ໃຫ້ເປື້ອນໃສ່ໄຂ່ເພື່ອບໍ່ໃຫ້ໄຂ່ເນົ່າໃນເວລາຟັກ ຄວນນໍາເອົາໄຂ່ທີ່ເກັບແຕ່ລະມື້ນໍາໄປໄວ້ ໃນບໍລິເວນທີ່ມີອາກາດຖ່າຍເທສະດວກ ແລະບໍລິເວນບ່ອນເກັບມ້ຽນນັ້ນບໍ່ໃຫ້ແດດສ່ອງໃສ່ ພ້ອມທັງບ່ອນມ້ຽນໄຂ່ເປັນບ່ອນທີ່ສະອາດດີ ຖ້າສັງເກດເຫັນແມ່ໄກ່ໄຂ່ສຸດແລ້ວດ້ວຍການສັງເກດເບິ່ງແມ່ໄກ່ໝູບຢູ່ໃນ ຮັງໃຊ້ເວລາດົນຄວນນໍາເອົາໄຂ່ທີ່ເກັບໄວ້ໄປໃຫ້ແມ່ໄກ່ຟັກໃນລະຫ່ວາງທີ່ ແມ່ໄກ່ຟັກຢູ່ນັ້ນຄວນຈັດຕຽມອາຫານ ແລະ ນໍ້າໄປໄວ້ໃນບໍລິເວນໃກ້ໆທີ່ແມ່ໄກ່ຟັກເພື່ອປ້ອງກັນບໍໃຫ້ແມ່ໄກ່ໄປຊອກຫາອາຫານ ເປັນເວລາດົນນານ.

## 8. ການລ້ຽງໄກ່ນ້ອຍ

ທໍາມະຊາດຂອງໄກ່ພຶ້ນເມືອງເມື່ອຟັກເບາະລູກອອກມາ ແລ້ວຍັງຕ້ອງໄດ້ລ້ຽງລູກໂດຍຫານອາຫານ ກິນຕາມທໍາມະຊາດເມື່ອລູກໄກ່ນ້ອຍອາຍຸໄດ້ 6_10 ອາທິດແມ່ໄກ່ຈຶ່ງຈະປ່ອຍໃຫ້ລູກຫາອາຫານກິນເອງ, ການທີ່ແມ່ ໄກ່ລ້ຽງລູກນັ້ນຈະມີຜົນເສັຍເຊັ່ນ: